


Le roman lao de Panay, à cause de son coq Bac Ok que sa soeur est enceinte...

ອີ່ແສງມັນເອົາຜົວອີ່ປຸ່ນໄດ້ປີປາຍແລ້ວ

ມັນມີເງິນປຸກເຮືອນແຖວສອງຊັ້ນ ໃຫ້ຄົນເຊົ່າ

ມີເງິນຊື້ຣົດອີ່ເຕົ່າໃຫ້ເຂົາແລ່ນຕັກຊີ... ນີ້ກໍໄດ້ຄ່າເຊົ່າອີກ

ເງິນອີ່ແສງບໍ່ອືດ....

ແຕ່ວ່າ ມັນບໍ່ຕ້ອງເຮັດຫຍັງ ພໍວອີ່ປຸ່ນມັນຫາມາໃຫ້

ອີ່ແມ່ແລ່ນຊື້ແລ່ນຂາຍຊິຕາຍ ຍັງບໍ່ໄດ້ພໍທໍ່ຂີ້ເລັບມັນ

ດຽວນີ້ອີ່ພໍ່ ມີຖາງນັ່ງກ້ອກເຊົ້າ ກ້ອກແລງ

ເຕົ້າກະບໍ່ໄຫຼ

ຕຸ້ມກະບໍ່ໃສ່

ກະດຸ້ງໃຫຍ່ກໍບໍ່ລົງ

ຄອງກິນນໍາແຕ່ອີ່ແສງຜູ້ດຽວ ... ມັນເປັນລູກເພິ່ນ

ລູກຕິດເພິ່ນມາແຕ່ເມັ່ງເກົ່າ

ມາເອົາກັບອີ່ແມ່ປູ່ທ່າງອນຈັ່ງໄດ້ຂ້ອຍ...ກະວ່າອີ່ແສງເປັນເອື້ອຍຂ້ອຍ ແຕ່ວ່າລູກ

ຄົນແມ່

ແຕ່ກີ້ອີ່ພໍ່ກັບອີ່ແມ່ຕໍາກັນຄູ່ມື້ ອີ່ແສງບໍ່ຖືກກັບແມ່ຂ້ອຍ

ຄືວ່າຫັ້ນແຫລະ ຂອງວ່າແມ່ນ້ຳກັບລູກຜົວ ມັນກະຕ້ອງກົດຕ້ອງຂົ່ມກັນແດ່

ແຕ່ອີ່ພໍ່ເລົາແພງລູກເລົາ

ເລົາວ່າດູຕົນມັນ ເປັນກໍາພ້າສະພັດສະພອຍ ກະພໍແຮງແລ້ວ ຍັງຊິດ່າຊິປ້ອຍ ບີບບີ້

ສີໄຟມັນຫຍັງອີກແຫ້

ຂ້ອຍບໍ່ຮູ້ເລີກຮູ້ຕື້ນນໍາເພິ່ນດອກ

ແຕ່ຄາວອີ່ແສງເປັນສາວຂ້ອຍກະຍັງນ້ອຍຢູ່ ພວມນັ້ນ ຂ້ອຍຮຽນຢູ່ຫ້ອງທີ່ສອງນ້ອຍ

ອີ່ແສງພວມຂຶ້ນສາວໃຫມ່

ລາງເທື່ອຂ້ອຍເຫັນມັນເອົາສິ້ນເກົ່າ ໆ ໄປຍົດໄວ້ເທິງກ້ອຍ

ຂ້ອຍມາບອກອີ່ແມ່ ວ່າອີ່ແສງເອົາສິ້ນຖິ້ມ ໄປຊີ້ບອກບ່ອນໃຫ້ອີ່ແມ່ ເອົາມາພິອອກເບິ່ງ

ບາດໃດ ລະແມ່ນສິ້ນເລືອດ

ອີ່ແມ່ຊິງຊີຂີ້ດຽດແຮງ ເບິ່ງເວົ້າເທິງດ່າເທິງປ້ອຍສຳປາປີ ບໍ່ຈັກອີ່ ຂີ້ ຫ...ຫນໍ່ ຝີ

ຄໍ້າພໍດີອີ່ແສງມາ

ເຣື່ອງກໍເລີຍດັງຂຶ້ນຄັບທິບພໍ ວ໋ ອັນນັ້ນ ....ອີ່ແມ່ດ່າວ່າ ມັນໃຫ່ງກິນ... ພີກິນ...ລ້າ ໆ

ສິ້ນເລືອດເຈົ້າຂອງມັນບໍ່ຈັກຕົບຈັກລ້າງ ເອົາໄວ້ຊຸບໄວ້ຮອງ ເທື່ອຫນ້າເປັນ ຊາດຄົນຈັ່ງໄຣ ບໍ່ຈັກແພງຂອງ ...ຊ ອມເບິ່ງໂລດ ຄັນມັນບໍ່ທຸກຮອດມື້ກະດູກເຂົ້າຫມໍ້ ພຸ້ນນະ

ອີ່ແສງຄືຊິເທິງຄຽດເທິງອາຍ

ຂ້ອຍເຫັນມັນໄຫ້ສະອື້ນທົບ ໆ ເຂົ້າແລງຮອດບໍ່ມາກິນ ດັກນອນໄຫ້ຢູ່ໃນເຮືອນ

ຕໍ່ອີກຈົນເດິກ ດີແຕ່ວ່າ ມື້ນັ້ນອີ່ພໍ່ເມືອວຽງ ບໍ່ມາ ຄັນມາຈັ່ງໃດກະໄດ້ເບິ່ງ ອີ່ພໍ່ສະແດງບົດ ບາດ ພະບູ້ຄັກ ໆ ໂລດ

ແລ້ວມື້ລຸນມາ...

ຄືຊິແມ່ນອີ່ແມ່ລົມສູ່ຟັງ ຫຼືໃດນີ້ລະ ສຽງຄູ່ຮັກຄູ່ແຄ້ນ ສອງເຖົ້າເພິ່ນອຸ່ມອິ່ມກັນສອງຄົນ
ໃນເຮືອນຕອນກ່ອນນອນ ໄດ້ຍິນພໍ່ມິດແຫມວວ່າ

" ແມ່ມັນຕາຍພໍແຮງແລ້ວ ຂ້ອຍເອົາກັບເຈົ້າ ກະໃຫ້ເຈົ້າຕວ່າເປັນແມ່ແທນ ແນວອັນໃດ ໆ ຊິດີຊິງາມ
ກະບອກສອນທິກທີ້ນເອົາແດ່ ອັນນີ້ຮ້ອຍມື້ພັນເວັນ ບໍ່ເວົ້າ

ບໍ່ຈາກັນຈັກເທື່ອ ອ້າປາກໃສ່ມັນຍາມໃດ ລະແມ່ນທາງຫ່າມາຢາມກ່ອນໂລດ ... ເຣື່ອງປະຈຳ ເດືອນ ປະຈຳດາກຫັ້ນ
ກະຄືກັນ... ເຈົ້າເດ້ ! ເຈົ້າເຄີຍເປັນໂລດເບາະ... ອີ່ແສງມັນກໍຄືກັນ ເຈົ້າເປັນແມ່ເຈົ້າກະບອກລະບໍ
ອັນນີ້ຫວັງຖ້າແຕ່ດ່າເອົາໂລດ "

" โป๊ว ! มันກໍສິມພໍດ່າແດ່ຫັ້ນແຫຼະກະຈັ່ງໄດ້ດ່າ "

ສຽງອີ່ແມ່ຖຽງຂຶ້ນຄ່ອຍ ໆ

" ໂຕເປັນລູກແມ່ຍິງກະເອີ້ຍ ໄປມາຊິກລິກຊິກລິນປານກວາງ ແພງຂອງມັນກະບໍ່ເປັນ

ຂ້ອຍລະບໍ່ຊ່າງຊິເວົ້ານຳ "

" ໃຜມັນຊິເປັນມາແຕ່ໃນທ້ອງ ເວົ້າຄືເຈົ້າບໍ່ເຄີຍເປັນມາກ່ອນຫຼາຍ ຂ້ອຍວ່າເປັນເລືອດ

ທຳອິດບໍ່ຈັກວ່າ ເທິງອາຍເທິງຕື່ນ ສັ່ນເຊັ່ນກະບໍ ! ຢ່າໄປດ່າມັນອີກຊິບອກໃຫ້ ຈັກຫນ່ອຍ ລະມັນຊິ
ເລີຍເປັນຄົນເປີ່ເຕີ່ເປ່ເຕ່ ໄປເລີຍ ແຮ່ງຊິຍາກຫົວເຮົາ "

ເຣື່ອງອີ່ແສງຄືນນັ້ນ ຈັກເພິ່ນລົມຫຽັງກັນຕໍ່ອີກບໍ່ຮູ້ ຂ້ອຍມ້ອຍຫຼັບໄປກ່ອນ ຍັງຄຶດ

ເສັຽດາຍຟັງຢູ່

ຂ້ອຍຢູ່ຫ້ອງທີ່ສອງນ້ອຍ...

ອາຍຸຄ້ຳພໍດີສິບປີ ອີ່ແສງລື່ນຂ້ອຍຫ້າປີ ມັນເປັນສາວແລ້ວ ຂ້ອຍຍັງນ້ອຍຢູ່ ແຕ່ກະແກ່

ແດດບໍ່ແມ່ນຂອງຄ່ອຍ

ອ້າຍທິດຜັນວ່າໃຫ້ຂ້ອຍແນວນີ້ເລື້ອຍ ໆ

ອ້າຍທິດຜັນນີ້ເປັນລູກປ້າພິງ ເອື້ອຍກົກຂອງອີ່ແມ່ ເຮືອນເລົາຢູ່ຄຸ້ມເຫນືອ ເລົາກາຍມາ

ທາງຄຸ້ມຂ້ອຍຢູ່ເລື້ອຍ ໆ ຍາມໂຮງຮຽນພັກ ຂ້ອຍມັກໄປໃສ່ເບັດຜຽກນຳເລົາ... ຂັດທ້າຍເຮືອ ໃຫ້ ຂ້ອຍບໍ່ມັກໄປນຳອີ່ພໍ່ ຊ
ັງເລົານານພາປັ້ນເຂົ້າ

ເວົ້າເຣື່ອງຫີວເຂົ້າ ອີ່ພໍ່ນີ້ຫົນເປັນຫົນ

ຂນາດຄູບາຕິກອງແລງ ເລົາຍັງບໍ່ເຕື້ອງວ່າຊິພາກິນງາຍ ໃຜຊິແຂວນທ້ອງນຳເລົາໄດ້

ໄປນຳອ້າຍພັນແຄນແດ່

ຫົວຫນ້ອຍນຶ່ງເລົາພາກິນໂລດ ປາເບັດເລົາກໍບໍ່ແພງ ພໍປີ້ງ ໆ ພໍຈີ່ ໆ ກິນມັນເຕັມມັກ

ຂ້ອຍລັກຄຶດຕຶບມີຢູ່ໃນໃຈວ່າ

" ແມວນີ້ມັນຈັ່ງແມ່ນຄົນຫາປູ່ຫາກິນ ແມວອີ່ພໍ່ນັ້ນແມ່ນຫາອຶດຫາປາກ "

ໂຮງຮຽນເປີດ (ມັນກະຍັງຢູ່ບ່ອນເກົ່າບໍ່ໄປໃສດອກ) ອີກບາດນີ້ຂ້ອຍໄດ້ຂຶ້ນຫ້ອງ

ຢູ່ຫ້ອງທີ່ສອງໃຫຍ່

ພວມນັ້ນມີອີ່ປຸ່ນມາບ້ານເຮົາສອງຄົນ ອີ່ປຸ່ນມາກັບເຈົ້ານາຍແລ້ວມາຈັບເອົາຄົນ…ຈ້າງ

ຄົນຖາງ ຈ້າງເອັດນັ້ນເອັດນີ້ ເບິ່ງພວກອ້າຍບ່າວບ້ານຂ້ອຍ ພາກັນຫລຸ ໄປເອັດລູກຈ້າງອີ່ປຸ່ນ ບັກຫຼາຍ ໆ ຄົນ
ຖ້າແນມຂ້ອຍເປັນບ່າວກະຊິໄປຄືກັນແຫຼະ ຂອງວ່າໄດ້ເງິນແລ້ວ ການກໍເອັດມີ ໂມງ…. ອ້າຍທິດພັນ
ຕໍ່ມາແມ່ຍິງກໄປເອັດນຳແດ່ ລາງຄົນເອັດຄົວກິນ-ເອັດຊັກຜ້າ ເບິ່ງເຮືອນ
ແລ້ວອ້າຍທິດພັນເລີຍພາອີ່ແສງໄປຝາກການນຳນາຍອີ່ປຸ່ນ ຜູ່ມາໃຫມ່ ເລົາຜູ່ນີ້ ເພິ່ນຊິມາຕັ້ງ ບ່ອນລ້ຽງໄກ່

ຍາມມື້ພັກ ຂ້ອຍມັກໄປຫຼິ້ນເປັນຫມູ່ອີ່ແສງ

ໄປເບິ່ງລົກໄກ່ອີ່ປຸ່ນ … ເປັນຕາອອນຊອນນຳເອົາແທ້ເອົາວ່າ ພາສາວ່າບ່ອນໄກ່ຢູ່

ກະປຸກດີກວ່າເຮືອນໄທບ້ານເຮົາ

ເພິ່ນເອົາໄກ່ນ້ອຍມາຫຼ້າຍ ຫຼາຍ ເບິ່ງຊິງຄືຊິຫາກໍ່ແຕກປ້ ເຫັນຍັງຢ່າງບໍ່ທັນແຂງເທື່ອ

ໄກ່ເປັນຮ້ອຍເປັນພັນ ຫາແມ່ຕຸ້ມຮອດບໍ່ມີ ຂ້ອຍຍັງຄຶດດູຕົນມັນ… ອ້າຍອີ່ປຸ່ນໄຕ້ຕະກຽງ ໃຫ້ເບິ່ງ ມັນມາຈຸ້ມກັນຢູ່ວ່າຊ
້ານ … ມັນຄືຊິອຸ່ນ… ເທິງຕາມເທິງໄກ່ນ້ອຍບໍ່ມີແມ່ ກະເລີຍໃຫຍ່ ມື້ ໃຫຍ່ເອັນ … ໄກ່ນ້ອຍເຮືອນຂ້ອຍເບາະ
ໄລ່ເລັ່ງກັບໄກ່ອີ່ປຸ່ນ ຫາພວມຮຽນຂັນ ໄກ່ບ່ອນອີ່ ແສງ ໄປເອັດການນຳເພິ່ນ ເອັດໃດ່ວ່າໄຂ່ແລ້ວ ເບິ່ງໂຕໃດ່ວ່າຊ້ານ
ໃຫຍ່ພໍປານວ່າຫ່ານ ຂົນແດງ ສີດຽວກັນຫມົດ ໄຂ່ແຕ່ລະຫນ່ວຍ ໃຫ້ວ່າສ່ຳໄຂ່ເປັດເອົາໂລດ

ເທິງມາເພິ່ນເອົາໄກ່ຫຼາຍແນວມາລ້ຽງອີກ

ຂ້ອຍປາກໄດ້ແນວໃກ່ເພິ່ນ ວິນໃຫ້ອີ່ແສງຂໍໃຫ້ປູ່ຕັ້ງປີຈິນ ຂ້ອຍໄດ້ຂຶ້ນຫ້ອງທີ່ນຶ່ງ ຄ່ອຍໄດ້ໃຫ້ທານສອງໂຕ ຜູ້ນຶ່ງ ແມ່ນຶ່ງ

ຂ້ອຍແພງຂອງຂ້ອຍປານຫນ່ວຍຕາ

ຂ້ອຍໄປຕັດໄມ້ໄຜ່ມາສານແຕະເອັດຄອກ ຂັງມັນໄວ້ ບໍ່ໃຫ້ມັນປີນຢູ່ກັບໄກ່ລາດ.

ແບກມາຈີນບ່າດຳບ່າແດງ ອອກທ້ອງແມ່ມາ ຂ້ອຍຍັງບໍ່ທັນເອັດຫຍັງ ເປັນຕ່ອນເປັນອັນຈັກເທື່ອ ມີເທື່ອນີ້ລະ ຂອງວ່າຂ້ອຍເປັນລູກຊາຍດຽວ ນ້ອງສາມຄົນກໍມີແຕ່ແມ່ຍິງ ໃຜ ໆ ກະແພງ ບໍ່ກ້າໃຊ້ວຽກຂ້ອຍຫຼາຍ ແຮ່ງອີ່ພໍ່ ກາງຕໍ່ປາກໃຫ້ຂ້ອຍ ໄດ້ເປັນນາຍ ເລີຍຄຸມໃຫ້ຮຽນ ແຕ່ຫນັງສື ວຽກອື່ນບໍ່ຄອງກິນນຳຂ້ອຍ.

ຂ້ອຍບໍ່ຊ່າງຊິຜ່າໄມ້ເຫຼົາເຊັນສານແຕະ

ກະແມ່ນອ້າຍທິດຜັນມາເອັດຊ່ອຍຈີນແລ້ວ

ຜັດແຕ່ໄດ້ໄກ່ມາ ຂ້ອຍຕື່ນເຕີກລຸກເຊົ້າ ຊອມເກືອໄກ່ ປ້ານມັນຈ່ອຍ

ອີ່ແມ່ຄີຊີຂຶນຕາ ເລົາເລີຍມາບວ່າ

" ຊອມເບິ່ງໄກ່ ບັກອັນນີ້ ມັນຊິເປັນດ້ອຍເຊົ້າຕາຍເທາະແມ !"

ຂ້ອຍເລີກໂຮງຮຽນມາມື້ນັ້ນ....

ເສັງໃຈຫຼາຍຈົນກັ້ນນ້ຳຕາໄວ້ບໍ່ຢູ່ເລີຍ ຍ້ອຍອອກມາພິບ ໆ

ອີ່ນາງ ນ້ອງຜູ່ຫຼ້າຂ້ອຍ ມັນໄປລັກໄຂຜັກຕູຄອກ ໄກ່ບັກໂອກ ເລີຍແລ່ນອອກໄປ ໃຫ້ຣົດຕັກຊິປຽບ ມຸ່ນອູ້ຍ ປູ້ຍ

ອີ່ແມ່ວ່າ ອີ່ຕາໂຊເຟີ ເລົາໃຊ້ຄ່າໄກ່ໃຫ້ຂ້ອຍພັນຫ້າ

ເງິນທໍ່ນັ້ນ ຂ້ອຍບໍ່ອີ່ນັງຊັງຂອບນຳດອກ ຂ້ອຍເສັງດາຍໄກ່ຂ້ອຍຫຼາຍກວ່າ ເຫຼືອໃຈ ພໍ ປາກໄປເຜິາຣິດຄັນນັ້ນຖິ້ມ ດີແຕ່ວ່າຂ້ອຍໄດ້ໄຂ່ ໄປຟັກແດ່ແລ້ວຊາວກວ່າຫນ່ວຍ ຈັ່ງວ່າໄດ້ແນວມັນລ້ຽງ ແຜ່ລູກແຜ່ຫຼານເທົ່າພອງດຽວນີ້... ບັກໂອກຕາຍແລ້ວ ອີ່ໂຕແມ່ ມັນກໍ ຍັງໄຂ່ຢູ່ບໍ່ຂາດ ແຕ່ວ່າເອົາຟັກບໍ່ເປັນໂຕ.

ອ້າຍອີ່ປຸ່ນຜູ່ເອົາໄກ່ໃຫ້ຄືຊິດູຕືນຂ້ອຍເລີຍເອົາບັກໂອກລາຍແນວມາໃຫມ່ ໃຫ້ຂ້ອຍອີກ

ມື້ຂ້ອຍໄປເອົາບັກໂອກລາຍໂຕໃຫມ່ ນຳອ້າຍອີ່ປຸ່ນນັ້ນ ມີແນວຕ່າງຕາຂ້ອຍຢູ່ແນວນຶ່ງ

ແຕ່ຂ້ອຍບໍ່ໄດ້ໃສ່ໃຈ ບໍ່ໄດ້ເວົ້າໃຫ້ອີ່ແມ່ຟັງ

ຈິນລຸນມາຫຼາຍເດືອນ ຂ້ອຍຈັ່ງຮູ້ວ່າ ອັນແນວມັນຕ່າງຕາຂ້ອຍມື້ນັ້ນ ມັນແມ່ນຫຽັງ ກັນແທ້

ຂ້ອຍຈຶ່ໄດ້ຄັກແນ່ວ່າ....

ອີ່ແສງສັ່ງໃຫ້ຂ້ອຍໄປເອົາໄກ່ໂອກລາຍໂຕໃຫມ່ ນຳອ້າຍອີ່ປຸ່ນ ຕອນເລີກໂຮງຮຽນ

ແຕ່ຄວາມປາກໄດ້ ກັບຄວາມດີໃຈຂອງຂ້ອຍແຮງຫຼາຍ ເລີຍຟາດຂາດໂຮງຮຽນ ສັ່ງ ຫມູ່ເຂົາ ອີ່ເກດຄອບນາຍຄູ ວ່າເຈັບຫົວ

ຕັ້ງທີ່ແທ້ ແມ່ນປາກໄປຈອບເຝົ້າເອົາໄກ່ ນຳອ້າຍອີ່ປຸ່ນ

ພວມນັ້ນຂ້ອຍຢູ່ຫ້ອງທີ່ນຶ່ງ ໃກ້ຊິເສັງແຊກແລ້ວລະ

ເຣື່ອງແບບວ່ານັ້ນ ກໍພໍຮູ້ປ່ອງຮູ້ແປວຢູ່ແດ່ ແນວຂ້ອຍກະຄືນແກ່ແດດ ຫມູ່ຫ້ອງດຽວ ກັນໃຫ່ງເຕັ້ມສາວຣຸ່ນອີ່ແສງກໍບໍ່ອຶດ ພວກນັ້ນເວົ້າກັນແຕ່ເຣື່ອງຢູ່ເຊັ້ຽລິມຜູ່ບ່າວ ບາງເທື່ອຫມູ່ ຕູຂ້ອຍໄປຈອບເບິ່ງເຂົາລິມກັນ ມາໂຮງຮຽນແລ້ວມາເຍີ້ຍເຂົາ

ອີ່ເກດນີ້ແຫຼະໂຕການ

ຂ້ອຍເຫັນມັນກອດກັນອ້າຍສອນປູ່ເຊັ່ງເຮືອນມັນ.... ອ້າຍສອນນີ້ເລົາເປັນນາຍພາສາ

ປູ່ນຳພວກອີ່ປຸ່ນ ໄທຕູຂ້ອຍເອົາມາໃສ່ໃຍມັນປູ່ໂຮງຮຽນ ມັນເລີຍໄລ່ເອົາໄມ້ບັນທັດເຫຼັກ ໂຂກ ຫົວຂ້ອຍຈົນໂນ

ຂ້ອຍບໍ່ຊາດອກ

ຂອງວ່າ ຂ້ອຍເສືອກໃສ່ໃຍມັນກ່ອນ ລິມແລ້ວລະມັນໂຂກຫົວໂນ ເປັນທີ່ຣະລຶກ

ຂ້ອຍໄປຄອງເອົາໄກ່ ດົນເປັນດົນບໍ່ເຫັນໃຜ.... ມີແຕ່ພວກເກືອໄກ່ນັ່ງຈຸ້ມຫົວລົມກັນ

ປູ່ສອງສາມຄົນ

ອ້າຍສອນ ນາຍພາສາ ຊິງຜົມພະເອກຊິເນ ຫ່ານັ້ນກໍບໍ່ເຫັນ

ຖາມຫາອີ່ແສງກັບອ້າຍອີ່ປຸ່ນ ຜູ່ເປັນນາຍລ້ຽງໄກ່ ພວກນັ້ນບອກວ່າ

ປູ່ເທິງເຮືອນ

ຂ້ອຍເລີຍວ່າຊິໄປຫາເອົາເອງ

ຂ້ອຍຍ່າງຊິໄປເຮືອນອ້າຍອີ່ປຸ່ນ ພວກນັ້ນບໍ່ຈັກເວົ້າຫຍັງ ຫົວອຶກ ໆ ແອກ ໆ ຂ້ອຍບໍ່ໄດ້

ຄຶດໃສ່ໃຈ ໃຂຂ້ອຍຄຶດປາກໄດ້ແຕ່ໄກ່ແນວດຽວ ເລີຍບໍ່ໄດ້ຫົວຊາວ່າຂະເຈົ້າຫົວຂວັນຫຍັງ....
ຫຼືວ່າຫົວກົ້ນສົ້ງຂ້ອຍຂາດເຊັ່ນເບາະ ?

ຣົດຊິບ ອ້າຍອີ່ປຸ່ນກະປູ່ຫັ້ນ .... ຣົດຖີບອີ່ແສງກະປູ່ຫັ້ນ....

ແຕ່ວ່າເຮືອນອັດຜັກຕູໃສ່ກອນທາງໃນ.... ແປວ່າຄົນຕ້ອງປູ່ທາງໃນ

ຄຶດໄປຄຶດມາເທິງເຕີບ ຂ້ອຍເລີຍຕັດສິນໃຈຮ້ອງອີ່ແສງ

ເອີ້ນຈົນຄໍຊິແຕກ ຈັ່ງວ່າໄດ້ຍິນສຽງຂານ

ມັນປູ່ໃນຫັ້ນແທ້ ໆ ຈັກແມ່ນມັນເອັດຕາຍອັນເລີປູ່ ໃຫ້ເອີ້ນດົນເປັນດົນ ຂານແລ້ວ

ກະອີກຕັ້ງເທີງ ຈັ່ງມາໄຂພັກຕູໃຫ້ ມັນຮອດບໍ່ປ່ອນຫົວອອກມາຊ້ຳ ຂ້ອຍຂຶ້ນໄປຫາມັນເທິງ ເຮືອນ ເຫັນມັນພວມມ້ຽນບ່ອນນອນອ້າຍອີ່ປຸ່ນຢູ່ ຜົມຍຸ້ງພໍປານວ່າຮັງນົກກະບາເອົາໂລດ ຖາມມັນວ່າ " ມຶວເອັດຫຍັງຢູ່ " ມັນວ່າ

" ກູກຳລັງອ່ານລັງສີຫຼິ້ນໄປຫຼິ້ນມາເລີຍຫຼັບ "

ຄືຊິແມ່ນຄວາມມັນຢູ່ ແນວວ່າວຽກບໍ່ມີຫຍັງຫຼາຍ

ອ້າຍອີ່ປຸ່ນຮັກມັນ ໃຫ້ເງິນເດືອນ ແພງ ໆ ແຕ່ງແຕ່ວຽກງ່າຍ ໆ ໃຫ້ເອັດ ໄປຕລາດມາ

ຄົວກິນ ເບິ່ງເຮືອນແປງປັດບ່ອນຫຼັບບ່ອນນອນ ແລ້ວກໍຫມົດທໍ່ຫັ້ນ ແຕ່ງກິນສ່ວນຫຼາຍ ອ້າຍອີ່ປຸ່ນ ກໍມາຊ່ອຍແອບໃຫ້ອີ່ແສງມັນເອັດ ຄັນເກັ່ງແລ້ວຊິຂຶ້ນເງິນເດືອນໃຫ້ອີກ....

ເວົ້າພື້ນເງິນເດືອນແລ້ວ

ຂອງອີ່ແສງຍັງຫຼາຍກວ່າເງິນເດືອນຈ່າຫວັງຊ້ຳ

ຈ່າຫວັງເລົາເປັນປູລິດມາຈົນເຖົ້າເກືອບສ່ຳອີ່ພໍ່ ເງິນເດືອນຍັງມີທໍ່ສິບແຈັດພັນປາຍ

ອີ່ແສງໄດ້ຕັ້ງວ່າຊາວພັນ

ມັນວ່າມັນເຄີ້ມຫຼັບຍ້ອນອ່ານຫັ່ງສື ຂ້ອຍກະບໍ່ໄດ້ໃສ່ໃຈເປັນແນວອື່ນ ແຕ່ກໍຕ່າງຕາ

ຢູ່ວ່າມັນເປັນຫຍັງ ຈັ່ງຕິດກະດຸມເສື້ອບໍ່ເຊີ່ງກັນ ຊໍເສື້ອຊ້ອນກະບໍ່ເກາະ ນ່ອຍນຶ່ງຊ້ຳມັບແມບ ເອົາໂສ້ງສລິບ ຊ່ງກອງເອາະເຍາະຢູ່ຕີນຕຽງອ້າຍອີ່ປຸ່ນ ຫຼືວ່າມັນກັບອ້າຍອີ່ປຸ່ນຊິ.... ຊິນອນ ?

ຄວາມປາກໄດ້ໄກ່ແຮງກວ່າ ຂ້ອຍເລີຍບໍ່ໄດ້ຄຶດຫຍັງໄປທາງນັ້ນ.... ແລ້ວອ້າຍອີ່ປຸ່ນ ຊ້ຳ

ພວມງົມສ່ອງເບິ່ງໄຂ່ຟັກ ຢູ່ຕູ້ໃນຫ້ອງມືດ ຂ້ອຍກະເລີຍເຊື່ອວ່າ ອີ່ແສງມັນເຄີ້ມຫຼູບໄປອີ່ຫຼີ

ມາສະເດືອກຄຶດຮູ້ວ່າຈັ່ງໃດ ໆ ມື້ນັ້ນກະຕ້ອງແມ່ນອີ່ຫຼີ ເອົາພີ້...

ຕັ້ງຫຼາຍເດືອນ

ມາຮູ້ວ່າອີ່ແສງກັບອ້າຍອີ່ປຸ່ມມີຫຍັງກັນກໍຍ້ອນວ່າ ມື້ນັ້ນ.... ຂ້ອຍມາແຕ່ໄປເບິ່ງຊື້ພອກ ເສັງແຊກໄດ້.... ເຫັນອີ່ພໍ່ຜູກສອກອີ່ແສງ ແລ້ວເອົາແສ້ຫວາຍຫວດເອົາ ໆ ຈົນອີ່ແສງຟົກທົ່ວ ໂຕ... ມັນບໍ່ ໄຫ້ພໍຄວາມ ສຽງສະອື້ນກະບໍ່ມີ ແຕ່ວ່າຂ້ອຍເຫັນນ້ຳຕາມັນຍ້ອຍ ຢາດລົງຮາດ ແກ້ມ.... ຕາອີ່ແສງແດງກົດລິດ ເທິງໄຂ່ມູມຈົນບໍ່ມີບ່ອນເບິ່ງ.... ອີ່ພໍ່ຫວດແສ້ລົງຫຼັງມັນ ຈົນ ເທົ້າພອງຄ່ຳມືດຈືດຕາຄ່ອຍເຊົາ ແຖມຍັງມາບອີ່ແສງວ່າ

" ແຕ່ມື້ນີ້ ໄປມຶງຢ່າໄດ້ມາເອີ້ນກູເປັນພໍ່ອີກເດັດຂາດ ອີ່ຊາດຫມາ...! ໃຫ້ເຂົາເຊີງທ້ອງ ໄຂ່ແລ້ວເຂົາຊິເບິ່ງມຶງບໍ່ .... ມຶງຊິເອົາລູກບໍ່ມີພໍ່ ມາໃຫ້ພໍ່ແກ່ມຶງນີ້ຫວາຄ້ຳກັມ ລ້ຽງມຶງມາ ກໍພໍ ແຮງ ແລ້ວ ໃຫຍ່ມາມຶງຍັງຊິຫາເຫົາມາໃສ່ຫົວກູອີກ.... ອີ່ຊີ້ນບໍ່ໄດ້ກິນ ຫນັງບໍ່ໄດ້ຮອງນັ່ງ.... ເລືອດກ້ອນດຽວ ກູຍອມໃຫ້ຫມາກິນ ດີກວ່າເວີ້ຍ ! "

ອີ່ພໍ່ທັງດ່າທັງຈົ່ມ ສົມເລົາເຈັບໃຈຢູ່ດອກ ພຽນລ້ຽງຕ່ອມເຕາະຕ່ອມຕ້ອຍມາ ແຕ່ມື້ ແມ່ຕາຍປະ.... ພໍໃຫຍ່ເປັນສາວຍັງບໍ່ເຕັມຄັກ ໄປໃຫ້ເຂົາຫຼິ້ນມານທາງແລ້ວເດ໊ ອີ່ພໍ່ໂມໂຫຈົນ ບໍ່ກິນເຂົ້າແລງ ສ່ວນອີ່ແມ່ຄືຊິຫນຳໃຈ ໄດ້ຍິນເລົາຫຍັນນ້ຳຫນ້າອີ່ພໍ່ຕື່ມວ່າ

" ອີ່ນີ້ ໄດ້ວ່າແລ້ວມັນຊິຜິດຄວາມປາກໄປໃສ ຂ້ອຍເບິ່ງມັນລະຕ່າງຕາພໍແຮງ.... ເບິ່ງໄປ ເບິ່ງມາ ເປັນສິດລິດແສດແຫຼດ ບໍ່ຄືບ້ານເຂົາເອົາໂລດ "

" ຢ່າຫຍັນໃດ໋ .... ຈັກຫນ່ອຍລະ....!" ອີ່ພໍ່ຮ້າຍຂຶ້ນ ຍັງບໍ່ທັນທີ່ອີ່ແມ່ຊິໄດ້ສຸດຄວາມ ເວົ້າ " ໂຄດແມ່ໃຜມັນຊິຄຽວຊິຄັນໄປໂລດ.... ເປີ.... ຢ່າມາຢູ່ກ້ອງຊາຍຄາເຮືອນກູ ມຶງໄດ້ຍິນ ບໍ່ອີ່ແສງ ? "

ຂ້ອຍຄຶດດູຕົນເອື້ອຍສຸດຫົວໃຈ.... ມັນເປັນເອື້ອຍຄົນແມ່ແທ້ຢູ່ ແຕ່ວ່າມັນກະດີນຳ ຂ້ອຍ ບໍ່ເຄີຍລ້ຽວເຄີຍຫຼາຍ.... ເຫັນຮອຍແສ້ຟົກເປັນຄູເລືອດຍ້ອຍທົ່ວຄີງ.... ເຫັນນ້ຳຕາ ເອື້ອຍຍ້ອຍຢາດລົງໃສ່ແຜ່ນແປ້ນ ນ້ຳຕາຂ້ອຍກະໄຫຼຊຶມອອກມາບໍ່ຮູ້ເມື່ອ

ອີ່ພໍ່ຍ່າງອອກໄປທາງຫນ້າເຮືອນ ໄປຊື້ເຫຼົ້າມາກິນໂຈກບັກໃຫຍ່ ເພື່ອແກ້ໂມໂຫ.... ອີ່ ແມ່ກໍພວມຫາເຂົ້າໃຫ້ພວກນ້ອງກິນ ຂ້ອຍອົດດູຕົນບໍ່ໄດ້ ເລີຍໄປແກ້ເຊືອກຜູກສອກເອື້ອຍ... ມັນຫຼຽວແນມເບິ່ງຫນ້າຂ້ອຍ ແສງຕາເສົ້າ ໆ ຄືຊິຢາກບອກວ່າ " ຂອບໃຈ " ແຕ່ບໍ່ປາກ ແລ້ວ

ສຽງສະອື້ນກໍແຮງຂຶ້ນສົມເຈັບສົມອາຍ.... ພໍແກ້ແຂນສອກອອກໄດ້ ອີ່ແສງຄວາກອດຂ້ອຍ ພໍ ປານວ່າລູກນ້ອຍ ໆ ທີ່ພວມຫິວນົມໄດ້ກິ່ນແມ່ມາຫາ.... ພໍ່ຂອງຂ້ອຍບໍ່ຄວນເລີຍຊິຂ້າຕີປີໂບຍ ອີ່ແສງມັນໂພດປານນີ້.... ອີ່ແວ່ນເຮືອນຟາກກັນ ມັນກະມີລູກນຳພວກຣິດໄມ້ ພໍ່ແມ່ມັນກະບໍ່ ເຫັນວ່າຂ້າ ວ່າແກງຄືນີ້

" ຈິດ " ອີ່ແສງເອີ້ນຊື່ຂ້ອຍສຽງສັ່ນ ໆ ປົນສະອື້ນ " ພາກູໄປຫາອ້າຍສີດາແດ່ ມັນມຶດກູບໍ່ກ້າໄປຜູ່ດຽວ "

ມັນຫມາຍເຖິງອ້າຍອີ່ປຸ່ນຜູ່ຈ້າງມັນເອັດການນຳ ຊື່ແທ້ເລົາ ຊື່ໂຍຊິດະ ແຕ່ພວກຂ້ອຍ ເອີ້ນຍາກ

ຂັດກົກລີ້ນເລີຍປ່ຽນຊື່ເລົາວ່າອ້າຍສີດາ

ຂ້ອຍບໍ່ປາກຫຍັງ ມີແຕ່ດຶງອີ່ເອື້ອຍລຸກຂຶ້ນ ແລ້ວພາກັນຈອບປ້ອງລົງຂັ້ນໄດທາງຊານ ຝົນ ລັດອອກທາງຫຼັງສວນ ແລ້ວຄ່ອຍໂຄ້ງເຂົ້າທາງຮ່ອມ ມາຕົກໃສ່ທາງໃຫຍ່... ອີ່ແສງກໍມິ ຂ້ອຍເທາ້ນ ບໍ່ຍອມວາງແລະບໍ່ປາກ ມີແຕ່ສຽງສະອື້ນມາສຸດທາງ ຈົນເຖິງທາງແວ່ໄປ ເຮືອນ ອ້າຍອີ່ປຸ່ນ ຂ້ອຍຈຶ່ງຖາມມັນວ່າ

" ມຶງໃຫ້ອ້າຍສີດາຫຼິ້ນມີລູກຊັ້ນເບາະ ? "

ມັນບໍ່ຕອບ ແຕ່ຂ້ອຍຮູ້ວ່າ ຊິງນີ້ແປວ່າມັນງຶກຫົວຢູ່ໃນໃຈ... ຂ້ອຍບໍ່ຕິ ມັນດອກ ເຖິງຈັ່ງໃດ໋ມັນກະເປັນເອື້ອຍ ຊໍ້າຍັງເອັດດີນຳຂ້ອຍ ແຕ່ກົກເຖິງປາຍ ບໍ່ເຄີຍຜິດບໍ້ ເຄີຍຊັງຫຍັງມັນ.... ແລ້ວເອັດໃດວ່າ ຂ້ອຍຊິລືມບຸນຄຸນມັນລົງ

ຄືນນັ້ນອ້າຍສີດາເອງກໍຫນ້າເສົ້າພໍປານຫຍັງ ເລົາຊອກເອີ້ນອ້າຍສອນ ນາຍພາສາ ແລ້ວກໍພາກັນມາຫາຍາພໍ່ກວນບ້ານ ໃຫ້ພາມາເຮືອນຕູຂ້ອຍ ອີ່ແສງບໍ່ຢາກມານຳ ຢ້ານອີ່ພໍ່ຕີ ອີກ ແຕ່ອ້າຍສີດາບອກວ່າ ບໍ່ຢ້ານເລົາຕີຊິໂດເປັນ ເລົາຊິບໍ່ຍອມໃຫ້ອີ່ພໍ່ຕີອີກ ເປັນເດັດຂາດ

ອ້າຍສອນແປຄວາມເວົ້າອ້າຍສິດາໃຫ້ຍາພໍ່ບ້ານຟັງວ່າ

" ນາຍໂຍຊິດະ ໄດ້ຫຼີ້ນສາວແສງຈັນຈົນມານ ພໍ່ຜູ່ສາວຕີສາວແສງຈັນ ເລີຍລັກໜີ

ອອກຈາກເຮືອນມາກັບນ້ອງຊາຍ ຍາພໍ່ກໍຮູ້ຈັກເຂົາຕວ່າ ? ບັດນີ້ ໂຍຊິດະ ເລົາວ່າຢາກຂໍນຳຍາ ພໍ່ບ້ານ ໃຫ້ຊ່ອຍໄປເວົ້າ ນຳພໍ່ສາວແສງແດ່ວ່າ ເລົາຊິຂໍແຕ່ງດອງກັບສາວແສງ ຖ້າວ່າທາງພຸ້ນບໍ່ ຂັດຂ້ອງ ເລົາຊິບໍ່ຂໍຖີ້ມຂໍປະ ເຖິງຈັ່ງໃດສາວແສງກໍມີລູກແລ້ວ ປ່ອຍໃຫ້ຂ້າຕີກັນຫຼາຍ ພໍດີພໍ ຮ້າຍ ຈັກໜ່ອຍເລີຍຊິຫລຸລູກອີກຊ້ຳ "

ເພິ່ນອະທິບາຍກັນຢູ່ຍືດຍາວ ມີແຕ່ຄວາມຜູ່ເຖົ້າບູຮານ ຂ້ອຍບໍ່ຊ່າງຈື່.... ມາຮອດ

ເຮືອນ ຂ້ອຍກໍລົມຄວາມຂັດຖຽງກັນຢູ່ດົນເປັນດົນ ອີ່ແມ່ຂັດຢາກໄດ້ຄ່າດອງແພງ ໆ ຮ້ອງເອົາ ນຳອ້າຍສິດາ ຕັ້ງວ່າຫ້າແສນ ເລົາວ່າເຮັດໃຫ້ເລົາເສັຽໜ້າເສັຽຕາວ່າຊັ້ນ ຈົນບາດຊິຊ້ຳ ອີ່ພໍ່ຕັດ ບົດວ່າ

" ຈັ່ງໃດມັນກໍເປັນໄປພໍແຮງແລ້ວ ຫາດາໃຫ້ເຂົາເອົາກັນໂລດ ແຕ່ງມື້ອື່ນແຮງດີ ຄ່າ

ດອງຄ່າຫຽັງກູບໍ່ວ່າດອກ ເງິນມັນບໍ່ ມາຊື້ໜ້າກູຄືນໄດ້ດອກ "

ເຣື່ອງກະຄ່ອຍແລ້ວກັນໄປ

ລຸນມາອີກສິບກວ່າມື້ ຈັ່ງໄດ້ເອັດດອງອີ່ແສງ

ທຳອິດວ່າຊິດອງກ່ອນນັ້ນແລ້ວລະ ແຕ່ຄາອີ່ແສງມັນເປັນໄຂ້ ອ້າຍສິດາພາເມືອປົວ

ປູ່ວຽງຕັ້ງອາທິດຈັ່ງເຊົາ.... ທ່ານໝໍບອກວ່າລູກໃນທ້ອງມັນເກືອບບໍ່ລອດແລ້ວ ຄັນບໍ່ໄປໂຮງ ໝໍມີຫວັງເສັດຄັກ ໆ

ດຽວນີ້ ອີ່ແສງມັ່ງມີເປັນດີ ໃຜ ໆ ກະຫຸ້ມກະຍ້ອງ ຫຸ້ມຊົມມັນ ພໍປານ

ວ່າເປັນເທວະດາ ອີ່ແມ່ແຮ່ງໂຕການສຳຄັນ.... ແຕ່ກີ້ຄືວ່າດ່າມັນ ປ້ອຍເຊົ້າປ້ອຍ ແລງ ດຽວນີ້ອີ່ແສງຊ ້ນິກເປັນນົກ ຊີ້ກາດຳວ່າກາຂາວ ອີ່ແມ່ກະວ່ານຳໂລດ ວ່າຊັ້ນເທາະ ພວມມັນມານທາງດ່າວ່າ " ມັນເອັດຂາຍໜ້າຂາຍຕາ "... ບັດມັນມີເງິນມາ ດຽວນີ້ ດົມຫໍາ ລູກມັນສູດ ໆ .... ນີ້ກະອີ່ແສງກູ....ນັ້ນກະອີ່ແສງກູ.... ຂ້ອຍແທ້ກະວ່າບໍ່ຊ່າງ.... ຄືເວົ້າມາແລ້ວ ຫັ້ນລະ ແນວວ່າອີ່ແສງມັນດີກັບຂ້ອຍຕລອດມາ ຂ້ອຍກະຕ້ອງຮັກມັນຄືນ ສົມເປັນລູກພໍ່ ດຽວກັນ

ກະຈັ່ງແມ່ນ.... ຂ້ອຍມີເງິນມີໂອກາດ ໄດ້ໄປຮຽນຕໍ່ຢູ່ໃນວຽງຈັນກະແມ່ນເງິນພີ່ອ້າຍ ເຂີຍອີ່ປຸ່ນຜົວອີ່ແສງດອກ ຊ
າອີ່ແມ່ກັບພໍ່ ເຊົາຊິມີປັນຍາສົ່ງຂ້ອຍຮຽນ....

ຊ້ຳບໍ່ພໍ...ລຸນມາອີກ ອີ່ແສງລົມຄວາມນ້ອຍສູ່ຂ້ອຍຟັງວ່າ ເຫຕທີ່ພາ
ໃຫ້ມັນຕ້ອງເສັງສາວເສັງໂຕໃຫ້ອ້າຍສີດາ ທຳອິດກະແມ່ນຍ້ອນໄປເອາະເຊ
ຈະອ້ອນວອນຂໄກ່ບັກໂອກ ກັບອີ່ແດງຄູ່ນັ້ນໃຫ້ຂ້ອຍ....ກົມເອນຂ້ອຍນໍ ປາກ ໄດ້ໄກ່ຈິນວ່າພານພາ
ໃຫ້ເອື້ອຍຕ້ອງສູນເສັຍພຣົມຈາຣີຍ້ອນ.... ຮັກນ້ຳໃຈອັນສອາດບໍຣິສຸດ ຂອງເອື້ອຍ ທີ່ຍອມເສັຽແມ່ແຕ່ພຣົມຈາຣີຊ
່ງຍິງນຶ່ງມີໄດ້ແຕ່ເທື່ອດຽວໃນຊີວິດ ພຽງເພື່ອຕອບ ສນອງຄວາມປາກ ອັນບໍ່ມີສາຣະຫງັງເລີຍຂອງນ້ອງຊາຍ...
ເອື້ອຍຍອມເອົາໂຕແລກກັບໄກ່ມາ ໃຫ້ຂ້ອຍ.... ແຕ່ກະດີໄປແນວນຶ່ງ....ອີ່ແສງໄດ້ກັບອ້າຍສີດາກະດີແລ້ວ
ເລົາເງິນເດືອນຫຼາຍ.... ຄັນແມ່ນເອົາຜົວຄົນລາວເຮົາ ຢ້ານມັນມາຊວນຂາຍມູນແມ່ກິນຊ້ຳບໍ່ຮູ້

ຍ້ອນໄກ່ບັກໂອກເປັນເຫດ ລູກອີ່ແສງອອກມາ ຂ້ອຍເລີຍໃສ່ຊື່ຫຼີ້ນ
ໃຫ້ມັນວ່າ " ບັກໂອກ " ເພື່ອເປັນອະນຸສອນ ແຫ່ງການເສັງສລະອັນສູງ ສຸດຂອງເອື້ອຍແລ້ວ
ຂ້ອຍສາບານກັບໂຕເອງວ່າ ຈະຕັ້ງໃຈຮຽນໃຫ້ດີທີ່ສຸດ ເພື່ອເປັນປະຈັກພິຍານວ່າ
ຂ້ອຍຮັກແລະດູດດື່ມຊຶມຊາບໃນນ້ຳໃຈຂອງ ເອື້ອຍຜູ້ນີ້ ຈິນບໍ່ມີພາສາຊາດໃດ ໆ ໃນໂລກນີ້
ຈະມາຂຽນບັນຍາຍໃຫ້ຖືກ ຕ້ອງຮູ້ສຶກອັນຕາມຄວາມແທ້ຈິງ
ໃນຫົວໃຈແລະສຳນຶກຂອງຂ້ອຍໄດ້....